**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບົດປະເມີນຜົນກະທົບ
# ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ)

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາ ໃນການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ

### 1.1 ຂໍ້ມູນຕິດຕໍ່ພົວພັນ

- ຊື່ກະຊວງ/ອົງການ: **ອົງການກວດກາແຫ່ງລັດ**
- ຊື່ກົມ/ພະແນກ: ກົມຄົ້ນຄວ້າ ແລະ ວາລະສານກວດກາ/ພະແນກຄົ້ນຄວ້ານິຕິກຳ.
- ຊື່ ແລະ ຕຳແໜ່ງຂອງພະນັກງານທີ່ຮັບຜິດຊອບ: **ທ. ຄຳພັນລີຟຸງ** ຮອງຫົວໜ້າກົມ ແລະ **ທ. ສຸກັນ ບຸດທະວົງ** ຮອງຫົວໜ້າກົມ.
- ເບີໂທລະສັບ: 020 54300396; 020 59578822
- ອີເມລ: sukanhbuthavong@yahoo.com

### 1.2 ຊື່ນິຕິກຳ

- ຊື່ຮ່າງນິຕິກຳ: ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ.
- ຮ່າງນິຕິກຳແມ່ນສະບັບ: ☐ໃໝ່ ☑ປັບປຸງ

### 1.3 ກຳນົດເວລາ

ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ ໃຫ້ສຳເລັດ ( ເວລາເລີ່ມສ້າງຈົນເຖິງສຳເລັດ)

- ແຕ່ງຕັ້ງຄະນະຮັບຜິດຊອບປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 19/ ອກຫລ, ລົງວັນທີ 09 ກຸມພາ 2023.
- ສຳເລັດການປັບປຸງຮ່າງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງເບື້ອງຕົ້ນ ໃນຕົ້ນເດືອນພະຈິກ 2023.
- ຜ່ານຄະນະພັກ ອົງການກວດກາແຫ່ງລັດ ໃນທ້າຍເດືອນ ພະຈິກ 2023.
- ຜ່ານການທາບທາມຄຳເຫັນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນເດືອນທັນວາ 2023.
- ສົ່ງຮ່າງກົດໝາຍສະບັບປັບປຸງ ໃຫ້ກຳມາທິການກົດໝາຍ ສະພາແຫ່ງຊາດ ຕົ້ນເດືອນ ມີນາ 2024.
- ສະເໜີເຂົ້າກອງປະຊຸມຄົ້ນຄວ້າວິຊາການ ຂອງສະພາແຫ່ງຊາດ ວັນທີ 14-16 ມີນາ 2024.
- ສະເໜີເຂົ້າກອງປະຊຸມກວດກາເນື້ອໃນຮອບດ້ານ ຂອງສະພາແຫ່ງຊາດ ວັນທີ 19-21 ມີນາ 2024.
- ລາຍງານຜົນການກວດກາເນື້ອໃນຮອບດ້ານ ຕໍ່ກອງປະຊຸມ ຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນ ເມສາ ຫາ ພຶດສະພາ 2024.
- ສະເໜີເຂົ້າກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງ ໃນກາງ ຫຼື ທ້າຍ ປີ 2024.

## 2. ບັນຫາ ແລະ ຈຸດປະສົງ

### 2.1 ບັນຫາ

ສະພາບການ ແລະ ບັນຫາທາງດ້ານການສະກັດກັ້ນ ແລະ ຕ້ານສໍ້ລາດບັງຫຼວງ ໃນໄລຍະຜ່ານມາມີດັ່ງນີ້:

1) ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໄດ້ສ້າງຂຶ້ນ ແລະ ຖືກຮັບຮອງ, ປະກາດໃຊ້ໃນປີ 2005 ເປັນຕົ້ນມາ ແລະ ໄດ້ປັບປຸງເທື່ອທີ 1 ແມ່ນປີ 2012 ຊຶ່ງໄດ້ເປັນບ່ອນອີງໃຫ້ແກ່ການສ້າງ-ປັບປຸງກົງຈັກ

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໃນການສະກັດກັ້ນຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ; ຜ່ານການເຄື່ອນໄຫວ ສາມາດເຫັນໄດ້ດ້ານດີດ້ານຕັ້ງໜ້າ ແລະ ດ້ານຄົງຄ້າງ, ສະພາບປະກົດການລ່ວງລະເມີດກົດໝາຍ, ລະບຽບການ ຕ່າງໆ ແລະ ບັນຫາດັ່ງກ່າວ ກໍ່ໄດ້ຮັບການແກ້ໄຂຊຶ່ງເປັນການປະກອບສ່ວນເຮັດໃຫ້ມີຄວາມສະຫງົບທາງການເມືອງ, ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການລົງທຶນພາຍໃນ, ຕ່າງປະເທດໄດ້ເພີ່ມຂຶ້ນ ແລະ ດຳເນີນ ຖືກຕາມກົດໝາຍ ແລະ ລະບຽບການ; ປະກົດການຫຍໍ້ທໍ້ຕ່າງໆ ໄດ້ຮັບການແກ້ໄຂໂດຍພື້ນຖານ.

2) ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ທີ່ນຳໃຊ້ໃນປັດຈຸບັນ ແມ່ນຍັງມີບາງເນື້ອໃນ ບໍ່ທັນ ລະອຽດ, ຄົບຖ້ວນ, ຮັດກຸມ, ຈະແຈ້ງ ແລະ ມີບາງເນື້ອໃນ ບໍ່ທັນສອດຄ່ອງກັບກົດໝາຍ, ນິຕິກຳອື່ນທີ່ກ່ຽວຂ້ອງ ແລະ ສະພາບການໃໝ່ ຂອງປະເທດເຮົາ. ສະນັ້ນ, ຈຶ່ງມີຄວາມຈຳເປັນຈະຕ້ອງປັບປຸງຄືນ.

### 2.2 ຈຸດປະສົງ

1) ການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງຄັ້ງນີ້ ເພື່ອເຮັດໃຫ້ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ມີຄວາມເຂັ້ມແຂງ, ສາມາດດຳເນີນຢ່າງມີປະສິດທິພາບ, ຊອກໃຫ້ເຫັນດ້ານດີ, ດ້ານ ຕັ້ງໜ້າ ເພື່ອຊຸກຍູ້ສົ່ງເສີມ; ຊອກໃຫ້ເຫັນດ້ານອ່ອນ, ດ້ານຫຍໍ້ທໍ້, ປະກົດການລະເມີດກົດໝາຍ ແລະ ລະບຽບການ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອມີມາດຕະການສະກັດກັ້ນ, ຕ້ານ ແລະ ແກ້ໄຂ, ແນໃສ່ເພີ່ມທະວີ ຄວາມສັກສິດ ຂອງການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ປົກປ້ອງຜົນປະໂຫຍດຂອງລັດ ແລະ ລວມໝູ່ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

2) ເປັນການອັດຊ່ອງຫວ່າງທີ່ກໍ່ໃຫ້ເກີດມີການສໍ້ລາດບັງຫຼວງ ແລະ ຕິດຖອຍປະກົດການຫຍໍ້ທໍ້ຕ່າງໆ ເປັນ ຕົ້ນແມ່ນພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງໃຫ້ຫຼຸດລົງເທື່ອລະກ້າວ ແລະ ໄດ້ຮັບການແກ້ໄຂຢ່າງຕັ້ງໜ້າ ກວ່າເກົ່າ. ເຮັດໃຫ້ ສປປ ລາວ ເປັນໜຶ່ງໃນບັນດາປະເທດ ທີ່ອີງການໂປ່ງໃສສາກົນຮັບຮູ້ ແລະ ໃຫ້ການສະໜັບສະ ໜູນຕໍ່ນະໂຍບາຍ ແລະ ມາດຕະການຕ້ານການສໍ້ລາດບັງຫຼວງຂອງລັດຖະບານ ແຫ່ງ ສປປ ລາວ ໃຫ້ນັບມື້ນັບຫຼາຍ ຂຶ້ນເປັນກ້າວໆ.

3) ເປັນການລວບລວມເອົາບາງເນື້ອໃນບັນດາກົດໝາຍ ແລະ ລະບຽບການ ທີ່ພົວພັນກ່ຽວກັບວຽກງານ ສະກັດກັ້ນຕ້ານການສໍ້ລາດບັງຫຼວງ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ເຂົ້າມາໃນຮ່າງກົດໝາຍ ວ່າດ້ວຍການ ຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ມີຜົນສັກສິດໃນການຈັດຕັ້ງ ປະຕິບັດ.

## 3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ

### 3.1 ທາງເລືອກທີ 1: ຮັກສາສະພາບການໃນປັດຈຸບັນ

ຖ້າຮັກສາສະພາບປະຈຸບັນ ຫຼື ບໍ່ມີການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບ ປັບປຸງປີ 2012 ແມ່ນຈະພົບຄວາມຫຍຸ້ງຍາກຫຼາຍ ໃນການຈັດຕັ້ງປະຕິບັດ ຍ້ອນວ່າຍັງມີບາງໝວດ, ບາງມາດຕາ ຍັງບໍ່ສອດຄ່ອງກັບຄວາມເປັນຈິງໃນປັດຈຸບັນ ແລະ ມີຄວາມຈຳເປັນໃນການເພີ່ມມາດຕາໃໝ່ຈຳນວນໜຶ່ງຕື່ມ ເພື່ອ ໃຫ້ສອດຄ່ອງກັບກົດໝາຍອື່ນທີ່ກ່ຽວຂ້ອງ.

**ການຮັກສາສະພາບປັດຈຸບັນມີຜົນດີ ແລະ ຜົນເສຍດັ່ງນີ້:**

★ **<u>ຜົນດີ:</u>**

- ຮ່າງກົດໝາຍສະບັບນີ້ ຖ້າຮັກສາສະພາບເນື້ອໃນປະຈຸບັນ ແມ່ນຈະບໍ່ສິ້ນເປືອງງົບປະມານ ໃນການ ປັບປຸງ.
- ເຮັດໃຫ້ເນື້ອໃນຂອງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຍັງຮັກສາເນື້ອໃນໄວ້ຄືເກົ່າ.

★ **<u>ຜົນເສຍ:</u>**

- ການຈັດຕັ້ງປະຕິບັດບໍ່ເຂັ້ມງວດ, ເດັດຂາດ, ການແກ້ໄຂຄະດີສໍ້ລາດບັງຫຼວງ ຍັງຈະສືບຕໍ່ພົບຄວາມ ຫຍຸ້ງຍາກ ແລະ ຊັກຊ້າແກ່ຍາວ;
- ກົງຈັກການຈັດຕັ້ງແຕ່ລະຂັ້ນ ບໍ່ໄດ້ຮັບການປັບປຸງໜັກແໜ້ນ, ເຂັ້ມແຂງ ແລະ ສອດຄ່ອງກັບໄລຍະໃໝ່;

- ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ ບໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ;

- ຜູ້ລະເມີດກົດໝາຍ ແລະ ລະບຽບການ ບໍ່ໄດ້ຮັບການແກ້ໄຂຢ່າງເດັດຂາດ ແລະ ເຂັ້ມງວດ.

**3.2 ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນນິຕິກຳ**

ຖືສຳຄັນວຽກງານການໂຄສະນາເຜີຍແຜ່, ຈັດຝຶກອົບຮົມ, ຈັດສຳມະນາ ໃຫ້ພະນັກງານ-ລັດຖະກອນ ແລະ ພົນລະເມືອງ ໃຫ້ມີສະຕິເຄົາລົບກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ, ປັບປຸງກົງຈັກບໍລິຫານລັດ ໃຫ້ກະທັດຮັດ, ໂປ່ງໃສກວດກາສອບໄດ້, ແກ້ໄຂຂອດຊ່ອງຫວ່າງ ແນ່ໃສ່ແກ້ໄຂບໍ່ມີປະກົດການລະເມີດແຕ່ຫົວທີ.

★ **ຜົນດີ**:

- ເຮັດໃຫ້ອົງການນິຕິບັນຍັດ ກໍຄືຂະແໜງການທີ່ກ່ຽວຂ້ອງຕ່າງໆ ໄດ້ມີການຄົ້ນຄວ້າ, ຄົ້ນຄິດສ້າງນິຕິກຳຂຶ້ນ ເພື່ອແກ້ໄຂການລະເມີດໂດຍໃຫ້ມີກົດໝາຍ;

- ເຮັດໃຫ້ສັງຄົມກໍຄືປະຊາຊົນໄດ້ຊອກຮູ້ ແລະ ເຂົ້າເຖິງກົດໝາຍຫຼາຍຂຶ້ນ.

★ **ຜົນເສຍ:**

- ບັນຫາທີ່ເກີດຂຶ້ນບໍ່ໄດ້ຮັບການແກ້ໄຂ ຢ່າງເດັດຂາດ ແລະ ບໍ່ຍຸຕິທຳ;

- ອົງການປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ກໍຄືຂະແໜງການກ່ຽວຂ້ອງ ມີຄວາມຫຍຸ້ງຍາກ ບໍ່ໄດ້ນຳໃຊ້ກົດໝາຍຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ.

**3.3 ທາງເລືອກທີ 3: ການສ້າງ ຫຼື ປັບປຸງນິຕິກຳ**

ການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຈະໄດ້ປັບປຸງຄືນບັນດາບົດບັນຍັດ ຂອງກົດໝາຍໃຫ້ມີເນື້ອໃນຮັດກຸມ, ຈະແຈ້ງ, ຄົບຖ້ວນ ແລະ ເຂົ້າໃຈງ່າຍ ພ້ອມທັງສອດຄ່ອງກັບສະພາບຕົວຈິງໃນປັດຈຸບັນ; ໄດ້ເພີ່ມບາງມາດຕາໃໝ່ເປັນຕົ້ນ: ນະໂຍບາຍຂອງລັດກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ; ການຮ່ວມມືສາກົນກ່ຽວກັບການຕ້ານການສໍ້ລາດບັງຫຼວງ; ລະບົບການຈັດຕັ້ງ, ພາລະບົດບາດ, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ; ບັນດາຂໍ້ຫ້າມ; ການຕິດຕາມກວດກາວຽກງານຕ້ານການສໍ້ລາດບັງຫຼວງ; ງົບປະມານ ແລະ ຕາປະທັບ. ຍັງໄດ້ປັບປຸງເນື້ອໃນບາງມາດຕາ ເປັນຕົ້ນແມ່ນ ການເຄື່ອນໄຫວສະກັດກັ້ນຕ້ານການສໍ້ລາດບັງຫຼວງ; ສິດ ແລະ ໜ້າທີ່; ມາດຕະການຕໍ່ຜູ້ລະເມີດ. ນອກນັ້ນ ຕັດອອກບາງມາດຕາຄື: ຄວາມຮັບຮັບຜິດຊອບຂອງອົງການຕ້ານການສໍ້ລາດບັງຫຼວງ; ຄວາມຮັບຜິດຊອບຂອງລັດ; ຄວາມຮັບຜິດຊອບຂອງອົງການຈັດຕັ້ງຕ່າງໆ; ສິດຂອງຜູ້ຖືກກວດກາ; ພັນທະ ແລະ ຄວາມຮັບຜິດຊອບຂອງຜູ້ຖືກກວດກາ; ການລັກໂລບ, ການປອມແປງມາດຕະຖານເຕັກນິກກໍ່ສ້າງ, ການໂກງການປະມູນ ຫຼື ການສຳປະທານ; ການເປີດເຜີຍຄວາມລັບເພື່ອຫາຜົນປະໂຫຍດສ່ວນຕົວ; ການກົດໜ່ວງ, ຖ່ວງດຶງເອກະສານ.

★ **ຜົນດີ**:

- ສາມາດປັບປຸງແກ້ໄຂກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໃຫ້ສອດຄ່ອງກັບກົດໝາຍອື່ນໃຫ້ມີຄວາມລະອຽດ, ຈະແຈ້ງ, ຄົບຖ້ວນພ້ອມທັງສອດຄ່ອງກັບນະໂຍບາຍຂອງລັດ;

- ການນຳໃຊ້ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຂອງຂະແໜງການທີ່ກ່ຽວຂ້ອງ ມີຄວາມສະດວກ ແລະ ເປັນເອກະພາບ;

- ສະກັດກັ້ນ ແລະ ຕ້ານການລະເມີດກົດໝາຍ ແລະ ລະບຽບການບໍ່ໃຫ້ເກີດຂຶ້ນ ຫຼື ເຮັດໃຫ້ຜູ້ລະເມີດມີຈຳນວນຫຼຸດລົງ;

- ປະເທດຊາດມີຄວາມໝັ້ນຄົງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ບັນດາປະເທດ ໃນພາກພື້ນ ແລະ ສາກົນ.

★ **ຜົນເສຍ:**

- ລັດຖະບານ ຕ້ອງໄດ້ໃຊ້ງົບປະມານ, ຊັບພະຍາກອນອື່ນໆ ຈຳນວນໜຶ່ງ ເຂົ້າໃນການປັບປຸງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ.

- ຍັງໄດ້ປັບປຸງບາງເນື້ອໃນກ່ຽວຂ້ອງບາງກົດໝາຍ ໃຫ້ສອດຄ່ອງກັນ ແລະ ຈະຕ້ອງໃຊ້ເວລາເຜີຍແຜ່ແນະນຳ, ຝຶກອົບຮົມອີກຫຼາຍບັນຫາ.

**3.4 ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກຳ**

**3.4.1 ເຫດຜົນໃນການເລືອກເອົາວິທີການດັ່ງກ່າວ**

ການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຖືເປັນວິທີທີ່ດີທີ່ສຸດ ໃນການແກ້ໄຂບັນຫາ ທີ່ເກີດຂຶ້ນຖ້າທຽບໃສ່ທາງເລືອກ ທີ່ກ່າວມາຂ້າງເທິງນັ້ນ, ເນື່ອງຈາກວ່າການປັບປຸງກົດໝາຍສະບັບດັ່ງກ່າວ ໃນຄັ້ງນີ້ຈະສັງລວມເອົາທຸກມາດຕະການຕໍ່ການປ້ອງກັນ ແລະ ຕ້ານການສໍ້ລາດບັງຫຼວງມາພິຈາລະນາ ພ້ອມດຽວກັນນັ້ນກໍ່ໄດ້ປັບປຸງຊຸ້ມຊ້ອນເນື້ອໃນຄືນບັນດາບົດບັນຍັດ ໃຫ້ມີຄວາມລະອຽດ, ຈະແຈ້ງ ແລະ ສອດຄ່ອງກັບສະພາບຕົວຈິງ; ນອກຈາກນີ້ກໍໄດ້ ກຳນົດເຂົ້າເພີ່ມ ບາງສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ ເພື່ອໃຫ້ສອດຄ່ອງ ກັບສະພາບປະຈຸບັນ.

ຍ້ອນເຫດຜົນທີ່ກ່າວມານີ້ ອົງການກວດກາແຫ່ງລັດ ກໍຄືຄະນະຮັບຜິດຊອບ ຈຶ່ງເລືອກເອົາການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ເປັນວິທີແກ້ໄຂບັນຫາ.

ນິຕິກຳທີ່ຈະສ້າງ ຫຼື ປັບປຸງນອນໃນຢູ່ປະເພດນິຕິກຳ ທີ່ຕ້ອງເຮັດບົດປະເມີນຜົນກະທົບ ຂອງຮ່າງນິຕິກຳບໍ່?

☑ແມ່ນ ☐ບໍ່ແມ່ນ

**3.4.2 ການປັບປຸງຮ່າງນິຕິກຳ**

ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງປີ 2012 (ເກົ່າ) ເຊິ່ງປະກອບດ້ວຍ 10 ໝວດ ແລະ 64 ມາດຕາ; ຮ່າງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ ປັດຈຸບັນປີ 2024 ນີ້ ປະກອບດ້ວຍ 10 ພາກ, 8 ໝວດ ແລະ 85 ມາດຕາ; ໃນນີ້, ເພີ່ມໃໝ່ 30 ມາດຕາ, ຕັດອອກ 8 ມາດຕາ, ປັບປຸງ 36 ມາດຕາ ແລະ ຮັກສາເນື້ອໃນເກົ່າ 19 ມາດຕາ. ເນື້ອໃນພື້ນຖານຂອງຮ່າງກົດໝາຍສະບັບປັບປຸງນີ້ ແມ່ນຍັງຮັກສາໄວ້ຄືເກົ່າ, ແຕ່ບາງມາດຕາ ໄດ້ມີການຜັນຂະຫຍາຍບາງເນື້ອໃນ ເພື່ອໃຫ້ລະອຽດ, ຈະແຈ້ງຕື່ມ ແລະ ໄດ້ເພີ່ມມາດຕາໃໝ່ເຂົ້າຕື່ມຈຳນວນໜຶ່ງ ໃຫ້ຄົບຖ້ວນ, ສົມບູນ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບກົດໝາຍອື່ນ.

**3.4.3 ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ**

☐ຈຳກັດ ☑ບໍ່ຈຳກັດ

ຖ້າມີການຈຳກັດ, ກະລຸນາອະທິບາຍວ່າ ຈະມີການຈຳກັດການແຂ່ງຂັນທາງທຸລະກິດຄືແນວໃດ ແລະ ຍ້ອນຫຍັງ?

**3.4.4 ພັນທະຕໍ່ສາກົນ**

- ຮ່າງນິຕິກຳຮຽກຮ້ອງ ໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼື ບໍ່?

  ☑ແມ່ນ ☐ບໍ່ແມ່ນ. ຖ້າແມ່ນ, ແມ່ນພັນທະອັນໃດ:

  ☐WTO ☐AEC ☐FTA ☑ອື່ນໆ (UNCAC)
- ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ມີຄວາມສອດຄ່ອງກັບພັນທະສາກົນນັ້ນ ຫຼື ບໍ່?

  ☑ສອດຄ່ອງ ☐ບໍ່ສອດຄ່ອງ

3.4.5 **ນິຕິກຳທີ່ພົວພັນ ການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ**

ບັນດານິຕິກຳ ທີ່ພົວພັນກັບຮ່າງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ທີ່ສະເໜີປັບປຸງ ແມ່ນພົວພັນເຖິງ 4 ຂົງເຂດຄື: ຂົງເຂດການປົກຄອງ ແລະ ຍຸຕິທຳ, ຂົງເຂດເສດຖະກິດ, ຂົງເຂດວັດທະນາທຳ-ສັງຄົມ ແລະ ຂົງເຂດປ້ອງກັນຊາດ-ປ້ອງກັນສະຫງົບ ເປັນຕົ້ນ:

1. ປະມວນກົດໝາຍອາຍາ;
2. ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

3. ກົດໝາຍ ວ່າດ້ວຍສະພາແຫ່ງຊາດ
4. ກົດໝາຍ ວ່າດ້ວຍລັດຖະບານ
5. ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ
6. ກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ
7. ກົດໝາຍ ວ່າດ້ວຍອົງການການກວດສອບ
8. ກົດໝາຍ ວ່າດ້ວຍການກວດກາລັດ
9. ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ
10. ກົດໝາຍ ວ່າດ້ວຍການລົງທຶນຂອງລັດ
11. ກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ
12. ກົດໝາຍ ວ່າດ້ວຍສານ ປະຊາຊົນ
13. ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ
14. ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ
15. ກົດໝາຍ ວ່າດ້ວຍການສ້າງນິຕິກຳ

ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼື ບໍ່?

☑ສອດຄ່ອງ ☐ບໍ່ສອດຄ່ອງ

## 4. ຄາດຄະເນຜົນກະທົບ ແລະ ການທາບທາມຄຳເຫັນ

### 4.1 ສັງຄົມ

#### 4.1.1. ຜົນກະທົບ

ປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບນີ້ ຈຸດປະສົງ ແມ່ນສະກັດກັ້ນຕ້ານການສໍ້ລາດບັງຫຼວງ, ການດຳເນີນການກວດກາການສໍ້ລາດບັງຫຼວງ, ການສືບສວນ-ສອບສວນຄະດີສໍ້ລາດບັງຫຼວງ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ, ສ່ວນຜູ້ບໍ່ລະເມີດ ແມ່ນຈະບໍ່ໄດ້ຖືກດຳເນີນການກວດກາ ແລະ ສືບສວນ-ສອບສວນ. ສະນັ້ນ ຜູ້ທີ່ຈະໄດ້ຮັບຜົນກະທົບຈາກກົດໝາຍສະບັບປັບປຸງນີ້ ແມ່ນຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການຕ່າງໆທາງດ້ານງົບປະມານ, ການລົງທຶນຂອງລັດ, ການຄຸ້ມຄອງບໍລິຫານລັດ ແລະ ອື່ນໆ ຈະແມ່ນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ; ສ່ວນຜູ້ທີ່ເສຍຜົນປະໂຫຍດຈະໄດ້ຮັບການປົກປ້ອງ.

★ **ຜົນກະທົບທາງບວກ:**

- ປະເທດຊາດມີຄວາມໝັ້ນຄົງ ແລະ ມີສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ເຂັ້ມແຂງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;
- ສາມາດແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງ ແລະ ສັງຄົມ;
- ຮັບປະກັນໃນການຄຸ້ມຄອງລັດ, ເສດຖະກິດ, ວັດທະນາທຳ-ສັງຄົມ ດ້ວຍກົດໝາຍ; ກົງຈັກການຈັດຕັ້ງລັດ, ເອກະຊົນ, ສັງຄົມ, ພະນັກງານ ມີຄວາມໂປ່ງໃສ, ປະຕິບັດກົດໝາຍເຂັ້ມງວດ, ຜູ້ກະທຳຜິດຖືກລົງໂທດ, ຜູ້ເສຍຫາຍໄດ້ຮັບການປົກປ້ອງ ຫຼື ປຽວຢາ;
- ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ບັນດາປະເທດໃນພາກພື້ນ ແລະ ສາກົນ.

★ **ຜົນກະທົບທາງລົບ:**

- ສັງຄົມ ກໍ່ຄືບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຕ້ອງປັບການເຄື່ອນໄຫວ, ການດຳລົງຊີວິດ, ການພົວພັນສັງຄົມຂອງຕົນ ໃຫ້ຢູ່ພາຍໃຕ້ກົດໝາຍຫຼາຍຂຶ້ນ, ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງເຄື່ອນໄຫວຫຼາຍຂຶ້ນ, ການລົງໂທດຫຼາຍຂຶ້ນ, ງົບປະມາຮັບໃຊ້ເພີ່ມຂຶ້ນ.

#### 4.1.2. ເງື່ອນໄຂໃນການປະຕິບັດນິຕິກຳ

ໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງນີ້ ຖືວ່າມີຄວາມສະດວກພໍສົມຄວນ ເນື່ອງຈາກວ່າພື້ນຖານຂອງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຍັງຮັກສາໂຄງຮ່າງ

ສະບັບເກົ່າ ແລະ ໄດ້ໂຄສະນາເຜີຍແຜ່, ຈັດຝຶກອົບຮົມເປັນແຕ່ລະໄລຍະ ໃຫ້ພະນັກງານເຮັດວຽກງານສະກັດກັ້ນຕ້ານການສໍ້ລາດບັງຫຼວງ ນັບທັງຢູ່ສູນກາງ ແລະ ທ້ອງຖິ່ນ ຊຶ່ງວຽກງານດັ່ງກ່າວ ໄດ້ເຮັດໃຫ້ສັງຄົມ ຮັບຮູ້ ແລະ ເຂົ້າໃຈກວ້າງຂວາງພໍສົມຄວນ.

ຄາດຄະເນຄ່າໃຊ້ຈ່າຍໃນການປະຕິບັດນິຕິກຳ:

★ ຄ່າໃຊ້ຈ່າຍເບື້ອງຕົ້ນ: ມີ

ໃຊ້ຈ່າຍໃນການລາຍງານ, ສະໜອງຂໍ້ມູນ, ການຕິດຕາມຂ່າວສານທີ່ຈຳເປັນ, ການຈັດພິມ ແລະ ອື່ນໆ.

★ ຄ່າໃຊ້ຈ່າຍໃນແຕ່ລະປີ: ມີ

ການຕິດຕາມຂ່າວສານທີ່ຈຳເປັນ, ຈັດຕັ້ງເຊື່ອມຊຶມ, ການໂຄສະນາເຜີຍແຜ່ ແລະ ອື່ນໆ.

**4.1.3. ການທາບທາມຄຳເຫັນ**

ການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໃນຄັ້ງນີ້ ຄະນະຮັບຜິດຊອບ ໄດ້ທາບທາມຄຳເຫັນຢ່າງກວ້າງຂວາງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ດ້ວຍຫຼາຍວິທີ ເປັນຕົ້ນໄດ້ເຮັດການປະເມີນ, ຈັດກອງປະຊຸມສຳມະນາ, ສົ່ງຮ່າງກົດໝາຍສະບັບປັບປຸງ ເພື່ອປະກອບຄຳເຫັນ.

ການທາບທາມລະດົມຄຳເຫັນຖືວ່າໄດ້ຮັບຄຳເຫັນທີ່ຫຼາກຫຼາຍ, ນັບທັງທິດສະດີ ແລະ ພຶດຕິກຳຕົວຈິງ ຊຶ່ງເປັນປະໂຫຍດ ໃຫ້ແກ່ຄະນະຮັບຜິດຊອບ ໃນການພິຈາລະນາຄົ້ນຄວ້າປັບປຸງເນື້ອໃນ ຂອງຮ່າງປັບປຸງກົດໝາຍໃນແຕ່ລະໄລຍະ ຕາມຄວາມເໝາະສົມ.

**4.1.4.ສະຫຼຸບ**

| **ຕົວຊີ້ວັດຜົນກະທົບ** | **ບໍ່ມີ** | **ໜ້ອຍ** | **ຫຼາຍ** |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ-ຜົນກະທົບຫຼາຍໝາຍເຖິງຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ-ຜົນກະທົບຫຼາຍໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>*(ຂໍ້ແນະນຳ-ຜົນກະທົບຫຼາຍໝາຍເຖິງຫຼາຍກວ່າ 800.000 ກີບຕໍ່ບຸກຄົນ)* | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ-ຜົນກະທົບໝາຍເຖິງມີຜົນກະທົບຫຼາຍຕໍ່ວິທີການດຳລົງຊີວິດຂອງບຸກຄົນ)* | ☑ | ☐ | ☐ |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ-ຜົນກະທົບຫຼາຍໝາຍເຖິງການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຜົນກະທົບນັ້ນແມ່ນມີໜ້ອຍຫຼືບໍ່ມີເລີຍ)* | ☑ | ☐ | ☐ |

**4.2 ພາກທຸລະກິດ**

**4.2.1 ຜົນກະທົບ**

ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ ມີຜົນກະທົບສໍາລັບພາກທຸລະກິດ ເປັນຕົ້ນ ການດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກສິນຄ້າ, ການກໍ່ສ້າງ-ສ້ອມແປງ, ການຂຸດຄົ້ນ ແລະ ທຸລະກິດໄມ້, ການສໍາຫຼວດ, ຂຸດຄົ້ນ ແລະ ສົ່ງອອກແຮ່ທາດ, ການບໍລິການ ແລະ ອື່ນໆ ທີ່ລະເມີດຕໍ່ເນື້ອໃນກົດໝາຍສະບັບນີ້.

★ **ຜົນກະທົບທາງບວກ:**

ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງນີ້ ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ພາກລັດ, ພາກເອກະຊົນ, ຕ່າງປະເທດ ໃນການດໍາເນີນທຸລະກິດເຄື່ອນໄຫວພາຍໃນລາວ ໂດຍສະເພາະໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງເຂົາເຈົ້າ. ການຫຼຸດຜ່ອນຕົ້ນທຶນທີ່ໃຊ້ກັບການຈ່າຍ ຫຼື ສິ້ນເປືອງໂດຍບໍ່ຈໍາເປັນ, ການເຄື່ອນໄຫວທຸລະກິດກ້າວສູ່ລະບຽບຫຼັກການ ແລະ ປັບປຸງລະບຽບພາຍໃນກ່ຽວຂ້ອງ, ການແຂ່ງຂັນມີຄວາມຍຸຕິທໍາຂຶ້ນ.

★ **ຜົນກະທົບທາງລົບ:**

ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ ບໍ່ມີຜົນກະທົບສໍາລັບພາກທຸລະກິດ ຖ້າວ່າບໍ່ໄດ້ກະທໍາຜິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບດັ່ງກ່າວນີ້.

### 4.2.2 ເງື່ອນໄຂໃນການປະຕິບັດນິຕິກໍາ

ໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງນີ້ ຈະມີຄວາມສະດວກພໍສົມຄວນ ເນື່ອງຈາກວ່າພື້ນຖານຂອງກົດໝາຍສະບັບນີ້ ຍັງຮັກສາໂຄງຮ່າງ ແລະ ເນື້ອໃນຕົ້ນຕໍຈາກສະບັບເກົ່າ ຊຶ່ງໄດ້ໂຄສະນາເຜີຍແຜ່ ໃຫ້ພາກທຸລະກິດ ຮັບຮູ້ ແລະ ເຂົ້າໃຈກວ້າງຂວາງພໍສົມຄວນແລ້ວ.

ຄາດຄະເນສິ້ນເປືອງສະເລ່ຍຕໍ່ຫົວໜ່ວຍທຸລະກິດ ໃນການປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ:

★ ຄ່າໃຊ້ຈ່າຍເບື້ອງຕົ້ນ: ມີ

ໃຊ້ຈ່າຍໃນການລາຍງານ, ສະໜອງຂໍ້ມູນ, ການຕິດຕາມຂ່າວສານທີ່ຈໍາເປັນ, ທີ່ປຶກສາທາງດ້ານກົດໝາຍ ແລະ ອື່ນໆ.

★ ຄ່າໃຊ້ຈ່າຍໃນແຕ່ລະປີ: ມີ

ການຕິດຕາມຂ່າວສານທີ່ຈໍາເປັນ, ທີ່ປຶກສາທາງດ້ານກົດໝາຍ ແລະ ອື່ນໆ.

### 4.2.3 ການທາບທາມຄໍາເຫັນ

ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ, ຄະນະຮັບຜິດຊອບ ໄດ້ທາບທາມຄໍາເຫັນຈາກພາກທຸລະກິດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ການທາບທາມຄໍາເຫັນຖືວ່າໄດ້ຮັບຄໍາເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດ ໃຫ້ແກ່ຄະນະຮັບຜິດຊອບ ໃນການພິຈາລະນາຄົ້ນຄວ້າປັບປຸງເນື້ອໃນ ຂອງຮ່າງປັບປຸງກົດໝາຍ ໃນແຕ່ລະໄລຍະຕາມຄວາມເໝາະສົມ. ນອກນັ້ນ ໃນເວລາທາບທາມຢູ່ຈຸດສູນກາງ ມີຫຼາຍວິສະຫະກິດໄດ້ເຂົ້າຮ່ວມ ພື້ນຖານແມ່ນໃຫ້ການສະໜັບສະໜູນການປັບປຸງກົດໝາຍດັ່ງກ່າວ.

### 4.2.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈໍານວນຂະແໜງອຸດສາຫະກໍາທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນໍາ-ຜົນກະທົບຫຼາຍໝາຍເຖິງຂະແໜງອຸດສາຫະກໍາສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຈໍານວນຫົວໜ່ວຍທຸລະກິດທີ່ໄດ້ຜົນກະທົບ<br>*(ຂໍ້ແນະນໍາ-ຜົນກະທົບຫຼາຍໝາຍເຖິງຫຼາຍກວ່າ 30% ຂະແໜງທຸລະກິດໃນຂະແໜງການໃດໜຶ່ງຫຼື 20% ຂອງທຸລະກິດລາວທີ່ຖືກຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍສໍາລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ) | ☑ | ☐ | ☐ |

| | | | |
|---|---|---|---|
| *(ຂໍ້ແນະນຳ-ຜົນກະທົບຫຼາຍໝາຍເຖິງມີການປ່ຽນແປງຫຼວງຫຼາຍ 1.600.000 ກີບຕໍ່ໜຶ່ງຫົວໜ່ວຍທຸລະກິດ)* | | | |
| ລະດັບການປ່ຽນແປງຕໍ່ວິທີການເຮັດທຸລະກິດທີ່ມີຢູ່ໃນປະຈຸບັນ *(ຂໍ້ແນະນຳ-ຜົນກະທົບຫຼາຍໝາຍເຖິງມີການປ່ຽນແປງຫຼວງຫຼາຍໃນການດຳເນີນທຸລະກິດ)* | ☑ | ☐ | ☐ |
| ການບໍ່ເຫັນດີຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກຳສະເໜີສ້າງຫຼືປັບປຸງ *(ຂໍ້ແນະນຳ-ຜົນກະທົບຫຼາຍໝາຍເຖິງມີການປ່ຽນແປງຫຼວງຫຼາຍການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບກະທົບນັ້ນແມ່ນມີໜ່ອຍຫຼືບໍ່ມີເລີຍ)* | ☑ | ☐ | ☐ |

### 4.3 ລັດຖະບານ

#### 4.3.1 ຜົນກະທົບ

ພາຍຫຼັງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງນີ້ ຖືກຮັບຮອງ ແລະ ປະກາດໃຊ້ ກາຍເປັນເຄື່ອງມືຕົ້ນຕໍທີ່ສຳຄັນ ໃຫ້ແກ່ອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ ໃນການສືບຕໍ່ປັບປຸງກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວສະກັດກັ້ນຕ້ານການສໍ້ລາດບັງຫຼວງ ຂອງກະຊວງ, ອົງການ, ອົງການລັດທຽບເທົ່າກະຊວງ ແລະ ທ້ອງຖິ່ນ; ສາມາດຈຳກັດ, ສະກັດກັ້ນຕ້ານການລະເມີດທາງດ້ານການຄຸ້ມຄອງການບໍລິຫານລັດ ແລະ ເປັນພື້ນຖານອັນສຳຄັນ ໃນການສ້າງລັດແຫ່ງກົດໝາຍ. ເພື່ອສ້າງເງື່ອນໄຂ ໃຫ້ການປະຕິບັດໄດ້ຄືດັ່ງທີ່ກ່າວມານັ້ນ ລັດຖະບານຕ້ອງໄດ້ນຳໃຊ້ງົບປະມານຈຳນວນໜຶ່ງ ເຂົ້າໃນການໂຄສະນາ, ເຜີຍແຜ່ ໃຫ້ພົນລະເມືອງຮັບຮູ້ ແລະ ເຂົ້າໃຈກ່ຽວກັບກົດໝາຍ ສະບັບດັ່ງກ່າວນີ້ ຢ່າງກວ້າງຂວາງ ແລະ ທົ່ວເຖິງ.

**★ຜົນກະທົບທາງບວກ:**

- ບັນດາອົງການຈັດຕັ້ງລັດ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ມີຄວາມສະດວກ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດກົດໝາຍ;
- ເປັນບ່ອນອີງທີ່ສຳຄັນ ໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການດຳເນີນການກວດກາ, ການສືບສວນ-ສອບສວນ ຕໍ່ຜູ້ລະເມີດ;
- ເປັນເຄື່ອງມືຂອງລັດ ໃນການກຳຈັດ, ສະກັດກັ້ນ ແລະ ຕ້ານການລະເມີດ ທີ່ອາດເກີດຂຶ້ນໃນກົງຈັກຂອງລັດຖະບານ;
- ເປັນບ່ອນອີງໃນການປ້ອງກັນແກ້ໄຂຄວາມເສຍຫາຍ ທີ່ອາດເກີດຂຶ້ນຕໍ່ລັດ, ການຈັດຕັ້ງ, ສັງຄົມ, ບຸກຄົນ ທີ່ມາສາເຫດມາຈາກການລະເມີດກົດໝາຍ ຫຼື ການສໍ້ລາດບັງຫຼວງຂອງພະນັກງານລັດ.
- ສ້າງຄວາມເຊື່ອໝັ້ນ ໃຫ້ພົນລະເມືອງ.

**★ຜົນກະທົບທາງລົບ:**

ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງນີ້ ໄດ້ກຳນົດໃຫ້ລັດຖະບານ ຕ້ອງນຳໃຊ້ງົບປະມານເຂົ້າໃນການຈັດຕັ້ງປະຕິບັດ, ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ຝຶກອົບຮົມວຽກງານສະກັດກັ້ນຕ້ານການສໍ້ລາດບັງຫຼວງ, ການກວດກາ ແລະ ການສືບສວນ-ສອບສວນ, ການປະຕິບັດໂທດ, ການເກັບກູ້, ການຄຸ້ມຄອງຊັບສິນ, ການຮ່ວມມືກັບຕ່າງປະເທດ; ພ້ອມກັນນັ້ນຕ້ອງໄດ້ປັບປຸງບາງເນື້ອໃນຂອງລະບຽບການທີ່ກ່ຽວຂ້ອງ ເພື່ອໃຫ້ສອດຄ່ອງກັນ.

#### 4.3.2 ເງື່ອນໄຂໃນການຈັດຕັ້ງປະຕິບັດນິຕິກຳ

ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງນີ້ ຖືວ່າມີພື້ນຖານອັນດີ ເນື່ອງຈາກວ່າລັດຖະບານກໍຄືອົງການຈັດຕັ້ງປະຕິບັດກົດໝາຍມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບບັນຫາດັ່ງກ່າວມາກ່ອນແລ້ວ, ມີພຽງບາງບັນຫາເທົ່ານັ້ນ ທີ່ຈະຕ້ອງໄດ້ປຶກສາຫາລື ແລະ ຝຶກອົບຮົມກັນຕື່ມ ໂດຍສະເພາະບ່ອນທີ່ກຳນົດເນື້ອໃນເຂົ້າໃໝ່.

★ ຄ່າໃຊ້ຈ່າຍເບື້ອງຕົ້ນ: ມີ

ຈັດພິມ, ໂຄສະນາ, ເຜີຍແຜ່, ແນະນໍາ, ການບໍາລຸງຮັກສານິຕິກໍາທາງດ້ານເອເລັກໂຕນິກ ແລະ ອື່ນໆ.

★ ຄ່າໃຊ້ຈ່າຍຕໍ່ປີ: ມີ

ຝຶກອົບຮົມ, ການບໍາລຸງຮັກສານິຕິກໍາທາງດ້ານເອເລັກໂຕນິກ, ການເຄື່ອນໄຫວຕ້ານການສໍ້ລາດບັງຫຼວງ ແລະ ອື່ນໆ.

**4.3.3 ການທາບທາມຄໍາເຫັນ**

ການປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບນີ້ ນອກຈາກຈະມີຜູ້ຕາງໜ້າກະຊວງຍຸຕິທໍາ, ສະພາແຫ່ງຊາດ, ຫ້ອງວ່າການສໍານັກງານປະທານປະເທດ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເຂົ້າຮ່ວມເປັນຄະນະແລ້ວ, ຄະນະດັ່ງກ່າວ ຍັງໄດ້ນໍາຮ່າງປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໄປທາບທາມຄໍາເຫັນອົງການຈັດຕັ້ງຂອງລັດທຸກຂະແໜງການ, ຂັ້ນສູນກາງ ແລະ ທ້ອງຖິ່ນ, ພ້ອມດຽວກັນນັ້ນກໍໄດ້ປຶກສາຫາລືສະເພາະ ກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບບາງບັນຫາທີ່ບໍ່ຈະແຈ້ງຕື່ມອີກ ເປັນຕົ້ນແມ່ນ ຊື່ກົດໝາຍ, ການແຈ້ງຊັບສິນ, ພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ ແລະ ອື່ນໆ, ພ້ອມນັ້ນ ຍັງໄດ້ນໍາເອົາຮ່າງກົດໝາຍລົງເວບໄຊ້ ຂອງອົງການກວດກາແຫ່ງລັດ ເພື່ອໃຫ້ສັງຄົມສືບຕໍ່ປະກອບຄໍາເຫັນ.

ການທາບທາມຄໍາເຫັນ ຈາກອົງການຈັດຕັ້ງລັດ ຖືວ່າໄດ້ຮັບຄໍາເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດໃຫ້ແກ່ຄະນະຮັບຜິດຊອບ ໃນການພິຈາລະນາຄົ້ນຄວ້າປັບປຸງເນື້ອໃນ ຂອງຮ່າງປັບປຸງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໃນແຕ່ລະໄລຍະ ຕາມຄວາມເໝາະສົມ.

**4.3.4 ສະຫຼຸບ**

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈໍານວນຂັ້ນການປົກຄອງທີ່ໄດ້ຮັບຜົນກະທົບ(ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ) *(ຂໍ້ແນະນໍາ-ຜົນກະທົບຫຼາຍໝາຍເຖິງນິຕິກໍາມີຜົນກະທົບໃນທຸກຂັ້ນຂອງການປົກຄອງ)* | ☑ | ☐ | ☐ |
| ຈໍານວນອົງການຈັດຕັ້ງລັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນທີ່ໄດ້ຮັບຜົນກະທົບ *(ຂໍ້ແນະນໍາ-ຜົນກະທົບຫຼາຍໝາຍເຖິງຫຼາຍກວາ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນໄດ້ຮັບຜົນກະທົບເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການຢູ່ຂັ້ນແຂວງ)* | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ (ສະເລ່ຍ) *(ຂໍ້ແນະນໍາ-ຜົນກະທົບຫຼາຍໝາຍເຖິງຫຼວງຫຼາຍ 40.000.000 ກີບຕໍ່ອົງການຈັດຕັ້ງລັດ)* | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການເຮັດທຸລະກິດທີ່ມີຢູ່ໃນປັດຈຸບັນ *(ຂໍ້ແນະນໍາ-ຜົນກະທົບຫຼາຍໝາຍເຖິງມີການປ່ຽນແປງຕໍ່ການປະຕິບັດວຽກງານຂອງລັດຖະບານ)* | ☐ | ☑ | ☐ |
| ການບໍ່ເຫັນດີຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກໍາສະເໜີສ້າງຫຼືປັບປຸງ *(ຂໍ້ແນະນໍາ-ຜົນກະທົບຫຼາຍໝາຍເຖິງມີການປ່ຽນແປງຫຼວງຫຼາຍການເຫັນດີເປັນເອກະພາບລະຫວ່າງອົງການອົງການຈັດຕັ້ງລັດແມ່ນມີໜ້ອຍຫຼືບໍ່ມີເລີຍ)* | ☑ | ☐ | ☐ |

**5. ການຈັດຕັ້ງປະຕິບັດ**

**5.1 ການສະໜັບສະໜູນແກ່ບຸກຄົນ**

ເພື່ອຮັບປະກັນ ໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໃຫ້ໄດ້ຮັບຜົນດີນັ້ນ, ລັດຖະບານ ຕ້ອງໄດ້ອອກບົດແນະນໍາການຈັດຕັ້ງປະຕິບັດ, ຝຶກອົບຮົມໃຫ້ຂະແໜງການທີ່ກ່ຽວຂ້ອງ, ໂຄສະນາເຜີຍແຜ່ ໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈ ໂດຍຜ່ານໂທລະພາບ, ວິທະຍຸ, ໜັງສືພິມ, ເວັບໄຊ ຫຼື ວິທີການອື່ນ ທີ່ເໝາະສົມ.

**5.2 ການສະໜັບສະໜູນແກ່ພາກທຸລະກິດ**

ເພື່ອຮັບປະກັນ ໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໃຫ້ໄດ້ຮັບຜົນດີນັ້ນ, ລັດຖະບານ ຕ້ອງໄດ້ສະໜອງຂໍ້ມູນຂ່າວສານ ທາງດ້ານນິຕິກໍາ ເຜີຍແຜ່ແນະນໍາໃຫ້ຮັບຮູ້ເຂົ້າໃຈ ກ່ຽວກັບສິດ ແລະພັນທະ ໃນການປະຕິບັດກົດໝາຍໃຫ້ແກ່ພາກທຸລະກິດ ຢ່າງຄົບຖ້ວນ, ຈະແຈ້ງ.

**5.3 ແຜນການຈັດຕັ້ງປະຕິບັດ**

ພາຍຫຼັງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ ພາກສ່ວນທີ່ມີໜ້າທີ່ ໃນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ຕ້ອງໄດ້ເອົາໃຈໃສ່ໂຄສະນາ, ເຜີຍແຜ່ກົດໝາຍສະບັບນີ້ ໂດຍສະເພາະ ແມ່ນບາງເນື້ອໃນທີ່ກໍານົດເຂົ້າໃໝ່ ເພື່ອໃຫ້ພົນລະເມືອງຮັບຮູ້ ແລະ ເຂົ້າໃຈ; ປຸກລະດົມພົນລະເມືອງລາວທຸກຄົນເຂົ້າຮ່ວມໃນວຽກງານສະກັດກັ້ນຕ້ານການສໍ້ລາດບັງຫຼວງໃຫ້ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ພ້ອມດຽວກັນນັ້ນ ກໍຕ້ອງໄດ້ຈັດຝຶກອົບຮົມ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈເປັນເອກະພາບ ລະຫວ່າງອົງການປະຕິບັດກົດໝາຍດ້ວຍກັນ; ປັບປຸງບັນດາກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງອື່ນໆ ໃຫ້ມີຄວາມສອດຄ່ອງ, ພ້ອມທັງສ້າງອົງການຈັດຕັ້ງທີ່ກ່ຽວຂ້ອງຢ່າງເປັນລະບົບຄົບຊຸດ ເພື່ອສ້າງເງື່ອນໄຂໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ.

ຢ່າງໃດກໍຕາມກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບນີ້ ຖືວ່າໄດ້ເພີ່ມບາງມາດຕາໃໝ່ ຊຶ່ງມັນເປັນສິ່ງທ້າທາຍໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ກໍຄືອົງການປະຕິບັດກົດໝາຍ ໃນການຈັດຕັ້ງໃຫ້ມີຄວາມເປັນເອກະພາບກັນ. ນອກຈາກນີ້ ການກໍານົດບາງເນື້ອໃນໃໝ່ກໍເປັນບັນຫາສໍາຄັນ ຊຶ່ງຈະຕ້ອງໄດ້ໃຊ້ເວລາພໍສົມ ຄວນໃນການໂຄສະນາເຜີຍແຜ່ ໃຫ້ການຈັດຕັ້ງລັດ, ພະນັກງານ ແລະ ສັງຄົມ ກໍຄືປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.

**5.4 ງົບປະມານ ແລະ ແຫຼ່ງທຶນ**

ໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງສະບັບນີ້ ແມ່ນນໍາໃຊ້ງົບປະມານຂອງລັດຖະບານ ເຂົ້າໃນການໂຄສະນາເຜີຍແຜ່, ຝຶກອົບຮົມ, ຊື້ອຸປະກອນ ທີ່ທັນສະໄໝ ແລະ ນໍາໃຊ້ເຂົ້າໃນວຽກງານສະກັດກັ້ນຕ້ານການສໍ້ລາດບັງຫຼວງ ເພື່ອຮັບປະກັນໃຫ້ການປະຕິບັດວຽກງານດັ່ງກ່າວ ໃຫ້ໄດ້ຮັບຜົນດີ.

**5.5 ທົບທວນຄືນ**

ພາຍຫຼັງກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບນີ້ ມີຜົນສັກສິດແລ້ວ ໃນນຶ່ງທຸກໜຶ່ງປີ ຂະແໜງການຍຸຕິທໍາ ຕ້ອງເປັນໃຈກາງປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ທົບທວນຄືນຜົນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ລວມທັງກົດໝາຍອື່ນ ທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນປັບປຸງ ແກ້ໄຂບັນຫາທີ່ບໍ່ສອດຄ່ອງໃນແຕ່ລະໄລຍະ.

**5.6 ການອະນຸມັດ**

ໄດ້ເຮັດອັນໃດໃນລຸ່ມນີ້:

1. ☑ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກໍາ(ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄໍາແນະນໍາ ຫຼື;

2. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກໍາ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາຄໍາເຫັນຕໍ່ປະເມີນຜົນ.

ນະຄອນຫຼວງວຽງຈັນ, ວັນທີ 4 ມີນາ 2024

**ຫົວໜ້າຄະນະຮັບຜິດຊອບປັບປຸງກົດໝາຍ**

ວິໄລວັນ ບຸດດາຄໍາ